ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ເລກທີ ໒໗ /ປກສ

ນະຄອນຫຼວງວຽງຈັນ, ວັນທີ ໐໗. ມິຖຸນາ. ໒໐໒໓

# ແຈ້ງການ

**ເຖິງ:** ບັນດາ ກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງວຽງຈັນ, ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ວິສາຫະກິດ ກາຊີໂນ, ອົງການຈັດຕັ້ງສັງຄົມ, ຫົວໜ່ວຍທຸລະກິດ, ຜູ້ປະກອບການ, ນິຕິບຸກຄົນ ພາກລັດ ເອກະຊົນ ແລະ ພົນລະເມືອງລາວ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງປະຕິບັດ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເກມອອນລາຍ ສະບັບເລກທີ 948/ປກສ, ລົງວັນທີ 03 ພຶດສະພາ 2023.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 306/ນຍ, ລົງວັນທີ 19 ກັນຍາ 2018;
- ອີງຕາມ ແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 07/ຫສນຍ, ລົງວັນທີ 24 ມັງກອນ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເກມອອນລາຍ ສະບັບເລກທີ 948/ປກສ, ລົງວັນທີ 03 ພຶດສະພາ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການຈັດຕັ້ງປະຕິບັດໂຄງການ ບໍລິການຈັດການໄຊເບີລາວ ສະບັບເລກທີ 1129/ປກສ, ລົງວັນທີ 18 ພຶດສະພາ 2023.

ຍ້ອນຂະຫຍາຍຂອງການພະນັນອອນລາຍ ຊຶ່ງການພະນັນອອນລາຍ ຫຼື ເກມອອນລາຍ ແມ່ນການຫຼິ້ນເກມຜ່ານເຄືອຂ່າຍລະບົບອິນເຕີເນັດ ໃນຮູບແບບການສ່ຽງໂຊກທາງອອນລາຍ ທີ່ສາມາດເຂົ້າຫຼິ້ນຜ່ານໂທລະສັບມືຖື, ຄອມພິວເຕີ ແລະ ເຄື່ອງອຸປະກອນໄອທີອື່ນໆ ໄດ້ຢ່າງສະດວກ, ວ່ອງໄວ ຊຶ່ງປະຈຸບັນນີ້ກຳລັງມີທ່າອ່ຽງຂະຫຍາຍຕົວເພີ່ມຂຶ້ນໃນທົ່ວໂລກ ແລະ ມີຫຼາຍປະເທດ ໄດ້ຫັນມາຄຸ້ມຄອງ ແລະ ຄວບຄຸມບັນຫາດັ່ງກ່າວຢ່າງເປັນລະບົບ, ຮອດປະຈຸບັນນີ້ການພະນັນອອນລາຍຢູ່ປະເທດເຮົາ ຍັງສືບຕໍ່ເຄື່ອນໄຫວຢ່າງເສລີ ແລະ ມີແຫຼ່ງເງິນຕາເຂົ້າ-ອອກປະເທດ ໂດຍບໍ່ໄດ້ຮັບການຄຸ້ມຄອງເປັນຈຳນວນຫຼາຍ ຜູ້ໄດ້ລາຍຮັບແມ່ນ ບຸກຄົນ, ນິຕິບຸກຄົນ ທີ່ບໍລິການບໍ່ຖືກ ກົດໝາຍ ແລະ ລະບຽບການ ພາໃຫ້ເສຍຜົນປະໂຫຍດເປັນຈຳນວນຫຼວງຫຼາຍໃນແຕ່ລະປີ ຊຶ່ງມັນໄດ້ກໍ່ໃຫ້ເກີດມີປະກົດການຫຍໍ້ທໍ້ຫຼາຍດ້ານ ເຊັ່ນ ມີການຖົວະບົວະ, ຫຼອກລວງ, ການສໍ້ໂກງ, ມີຂະບວນການຟອກເງິນ, ຄ້າໂສເພນີ, ແຮງງານເຖື່ອນ, ການກໍ່ອາຊະຍາກຳທາງອິນເຕີເນັດ ແລະ ອື່ນໆ ທີ່ເປັນໄພພິດໃຫ້ແກ່ສັງຄົມ ສະນັ້ນ, ເພື່ອເປັນການຈັດຕັ້ງປະຕິບັດຂໍ້



สแกนด้วย CamScanner

ຕົກລົງວ່າດ້ວຍການຄຸ້ມຄອງເກມອອນລາຍ ສະບັບເລກທີ 948/ປກສ, ລົງວັນທີ 03 ພຶດສະພາ 2023 ໃນການສະກັດກັ້ນ, ແກ້ໄຂ ແລະ ຕ້ານການກໍ່ອາຊະຍາກຳໃນທຸກຮູບແບບ ເປັນຕົ້ນ ແມ່ນການພະນັນອອນລາຍ ຫຼື ເກມອອນລາຍ ທີ່ບໍ່ຖືກຕ້ອງຢູ່ ສປປ ລາວ ແລະ ຮັບປະກັນ ການຄຸ້ມຄອງ ແລະ ສະກັດກັ້ນ ແກ້ໄຂ ຢ່າງເຂັ້ມງວດ, ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງປ້ອງກັນຄວາມສະຫງົບ ໃນນາມເປັນເສນາທິການໃຫ້ແກ່ລັດຖະບານ ໃນການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂໍຖືເປັນກຽດ ແຈ້ງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ດັ່ງນີ້:

1. ຮຽກຮ້ອງມາຍັງບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ, ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ວິສາຫະກິດ ກາຊີໂນ, ອົງການຈັດຕັ້ງສັງຄົມ, ຫົວໜ່ວຍທຸລະກິດ, ຜູ້ປະກອບການ, ນິຕິບຸກຄົນ ພາກລັດ ເອກະຊົນ ແລະ ພໍ່ ແມ່ ປະຊາຊົນບັນດາເຜົ່າ ໃນຂອບເຂດທົ່ວປະເທດ ຕ້ອງເປັນເຈົ້າການ ສະກັດກັ້ນ ແລະ ແກ້ໄຂ ເກມອອນລາຍ ຫຼື ການພະນັນອອນລາຍ ດ້ວຍການຕິດຕາມ ກວດກາ, ສຶກສາອົບຮົມ, ກ່າວເຕືອນ ແລະ ແຈ້ງຂໍ້ມູນ ໃຫ້ແກ່ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ເພື່ອແກ້ໄຂ ຕາມລະບຽບການ.

ເຮັດການເມືອງແນວຄິດ ໃຫ້ແກ່ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ ແລະ ບັນດາລູກຫຼານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ, ທົ່ວເຖິງ ແລະ ມີສະຕິຕໍ່ກັບບັນຫາດັ່ງກ່າວ ທີ່ເປັນປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ສັງຄົມໃນປະຈຸບັນ ເພື່ອບໍ່ໃຫ້ຕົກຢູ່ໃນສະພາບການລະເມີດກົດໝາຍ ແລະ ລະບຽບການ;

2. ໃຫ້ບັນດາ ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ວິສາຫະກິດ ກາຊີໂນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ, ບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການ (ການບໍລິການອິນເຕີເນັດຄາເຟ, ຜູ້ບໍລິການເກມທຸກປະເພດ, ສະໂມສອນເກມໄຟຟ້າ, ຜູ້ເປີດບໍລິການ ໂອນ-ຖອນເງິນໄວ ແລະ ອື່ນໆ ທີ່ເຮັດບໍລິການ ການສ່ຽງໂຊກຜ່ານອິນເຕີເນັດ) ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີການໃຫ້ບໍລິການເກມອອນລາຍ ຫຼື ການພະນັນອອນລາຍ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໃຫ້ໂຈະຢຸດເຊົາການໃຫ້ບໍລິການເກມອອນລາຍທີ່ເປັນການພະນັນແອບແຝງທຸກຮູບແບບ ຢ່າງເຂັ້ມງວດ.

ສຳລັບ ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ວິສາຫະກິດ ກາຊີໂນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ, ບັນດາຫົວໜ່ວຍ ທຸລະກິດ, ຜູ້ປະກອບການ ທີ່ໄດ້ດຳເນີນກິດຈະການໃນປະຈຸບັນ ຕ້ອງໄດ້ໃຫ້ການຮ່ວມມື ແລະ ຂໍອະນຸຍາດດຳເນີນກິດຈະການເກມອອນລາຍ ນຳອົງການຄຸ້ມຄອງເກມອອນລາຍ ຕາມລະບຽບການ ໂດຍຜ່ານສຳນັກງານບໍລິສັດບໍລິຫານຈັດການໄຊເບີລາວ ຈຳກັດ;

3. ຫ້າມ ບຸກຄົນ, ນິຕິບຸກຄົນ, ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ ຢູ່ໃນດິນແດນ ສປປ ລາວ ເຂົ້າໃຊ້ບໍລິການເກມອອນລາຍ ຫຼື ການພະນັນອອນລາຍ ໃນທຸກຊ່ອງທາງ, ທຸກຮູບແບບ ຢ່າງເດັດຂາດ;

4. ກໍລະນີ ບັນດາ ຫົວໜ່ວຍທຸລະກິດ, ຜູ້ປະກອບການ (ການບໍລິການອິນເຕີເນັດຄາເຟ, ຜູ້ບໍລິການເກມທຸກປະເພດ, ສະໂມສອນເກມໄຟຟ້າ, ຜູ້ເປີດບໍລິການ ໂອນ-ຖອນເງິນໄວ ແລະ ອື່ນໆ ທີ່ເຮັດບໍລິການ ການສ່ຽງໂຊກຜ່ານອິນເຕີເນັດ), ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຍັງບໍ່ມີການປັບປຸງ, ແກ້ໄຂ ກ່ຽວກັບເກມອອນລາຍ ຫຼື ການພະນັນອອນລາຍ ຕາມທີ່ໄດ້ກຳນົດໄວ້ຂໍ້ 2 ແລະ ຂໍ້ 3 ຂອງແຈ້ງການສະບັບນີ້ ຫາກສືບຕໍ່ຍັງມີການລະເມີດ ຖ້າເຈົ້າໜ້າ



สแกนด้วย CamScanner

ທີ່ກວດພົບເຫັນ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແລະ ຈະຖືກດໍາເນີນຄະດີ ໃນສະຖານ ເບົາ ຫຼື ໜັກ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

5. ມອບໃຫ້ ອົງການຄຸ້ມຄອງເກມອອນລາຍ, ກົມໃຫຍ່ 502, ກົມໃຫຍ່ 503, ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນຫຼວງ, ແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການ ຕິດຕາມ ກວດກາ, ສຶກສາອົບຮົມ, ກ່າວເຕືອນ, ສະກັດກັ້ນ ແລະ ແກ້ໄຂ ຕໍ່ກັບ ບຸກຄົນ, ນິຕິບຸກຄົນ ແລະ ບັນດາຫົວໜ່ວຍທຸລະກິດ, ຜູ້ປະກອບການ ທີ່ມີການໃຫ້ບໍລິການເກມອອນລາຍ ຫຼື ການພະນັນອອນລາຍ ທີ່ຍັງມີການລະເມີດ ໃຫ້ນໍາໃຊ້ມາດຕະການທາງດ້ານ ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;

ດັ່ງນັ້ນ, ກະຊວງປ້ອງກັນຄວາມສະຫງົບ ຈຶ່ງແຈ້ງມາຍັງ ກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ອົງການຈັດຕັ້ງສັງຄົມ, ຫົວໜ່ວຍທຸລະກິດ, ຜູ້ປະກອບການ, ນິຕິບຸກຄົນ ພາກລັດ ເອກະຊົນ ແລະ ພົນລະ ເມືອງລາວ ໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ລັດຖະມົນຕີ

ວິໄລ ຫຼ້າຄໍາຟອງ



สแกนด้วย CamScanner